# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 23 ມີນາ 2008 ( 03-23-2008 )

## ດຳຣົງຊີວິດ 3:16 - ມີຊີວິດຢູ່ໂດຍຣິດອຳນາດ

**ຂໍ້ພຣະຄັມພີໃນບົດຮຽນ:** ( ເອເຟໂຊ 1:18-21; 2:4-9; 3:16-21 )

**ຄຳຖາມຊີວິດ:** ການຄືນພຣະຊົນຂອງພຣະເຢຊູມີຄວາມໝາຍຕໍ່ຂ້າພະເຈົ້າຢ່າງໃດ?

**ຄວາມຈິງໃນພຣະຄັມພີ:** ການຊົງບັນດົນໃຫ້ອົງພຣະເຢຊູຄຣິດຟື້ນພຣະຊົນ ພຣະເຈົ້າໄດ້ຊົງສຳແດງຣິດອຳນາດອັນຍິ່ງໃຫຍ່ ທີ່ພຣະອົງຊົງປະທານໃຫ້ຜູ້ທີ່ເຊື່ອທາງພຣະວິນຍານໃນການດຳຣົງຊີວິດ

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານໃຫ້ດຳຣົງຊີວິດໃນແຕ່ລະວັນດ້ວຍຄວາມໝັ້ນໃຈ ແລະມີຄວາມຫວັງ ໂດຍ...:

* ພົບວ່າການຟື້ນພຣະຊົນຂອງພຣະເຢຊູໝາຍເຖິງ ພຣະເຈົ້າຊົງປະທານຊີວິດໃໝ່ໃຫ້ຜູ້ທີ່ເຊື່ອດ້ວຍຣິດອຳນາດອັນຍິ່ງໃຫຍ່ໃນການດຳເນີນຊີວິດ ແລະ...
* ຕັດສິນໃຈທີ່ຈະຮັບເອົາຊີວິດໃໝ່ນັ້ນໂດຍເຊື່ອວ່າພຣະເຢຊູຊົງເປັນພຣະຜູ້ໂຜດໃຫ້ພົ້ນ

## ສຶກສາພຣະຄັມພີ

ຂົງຈື້ ຕາຍໃນປີ 479 ກ່ອນ ຄ.ສ. ອາຍຸໄດ້ 52 ປີ, ພຣະພຸທເຈົ້າຕາຍໃນປີ 483 ກ່ອນ ຄ.ສ. ອາຍຸໄດ້ 80 ປີ, ໂມຮັມມັດ ຕາຍໃນປີ ຄ.ສ. 632 ອາຍຸໄດ້ 62 ປີ. ໂຢເຊບ ສະມິດ ຕາຍໃນປີ 1844 ອາຍຸໄດ້ 38 ປີ. ບຸກຄົນທີ່ກ່າວມານີ້ໄດ້ຖືກຮັບຮູ້ວ່າເປັນຜູ້ສ້າງຕັ້ງສາສນາ ຊຶ່ງໃນປັດຈຸບັນນີ້ມີຜູ້ຕິດຕາມເປັນຈຳນວນຫລາຍລ້ານຄົນ ເປັນເວລາຫລາຍສິບປີ ແລະຫລາຍສັດຕະວັດຫລັງຈາກທີ່ເຂົາເຈົ້າໄດ້ຕາຍໄປ. ແຕ່ວ່າສາສນາເຫລົ່ານີ້ບໍ່ໄດ້ໃຫ້ຣິດອຳນາດໃນການດຳຣົງຊີວິດແກ່ຜູ້ທີ່ເຊື່ອແຕ່ຢ່າງໃດ.

ມີແຕ່ພຣະເຈົ້າເທົ່ານັ້ນທີ່ປະທານຣິດອຳນາດໃຫ້ໄດ້ ໃນການດຳລົງຊີວິດໃຫ້ເປັນທີ່ພໍພຣະທັຍພຣະອົງ ແລະພຣະອົງຊົງກະທຳຜ່ານທາງພຣະວິນຍານທີ່ຊົງສະຖິດຢູ່ນຳພວກເຮົາ ໂດຍທາງການຄືນພຣະຊົນຂອງພຣະເຢຊູຄຣິດ. ຂ້າພະເຈົ້າຈຳເປັນຕ້ອງເຮັດຫຍັງແດ່ເພື່ອຈະໄດ້ຮັບຣິດອຳນາດນີ້ໃນການດຳຣົງຊີວິດ? ພຣະເຈົ້າຈະຊົງປະທານໂອກາດໃຫ້ບັນດາຜູ້ທີ່ບໍ່ເຊື່ອໄດ້ຮັບຄວາມລອດພົ້ນຢ່າງໃດ? ຂ້າພະເຈົ້າຕ້ອງເຮັດແນວໃດເພື່ອຈະບອກໃຫ້ບັນດາຜູ້ທີ່ບໍ່ເຊື່ອຕອບສນອງຕໍ່ພຣະເຈົ້າໂດຍມີຄວາມເຊື່ອໃນອົງພຣະຄຣິດ, ຜູ້ຊຶ່ງມີຊັຍຊະນະຕໍ່ຄວາມບາບ ແລະຄວາມຕາຍໂດຍທາງໄມ້ກາງແຂນແລະການຟື້ນພຣະຊົນຄືນໝາໃໝ່?

### 1. ຣິດອຳນາດອັນຍິ່ງໃຫຍ່. ( ເອເຟໂຊ 1:18-21 )

ໂປໂລໄດ້ຮັບໃຊ້ໃນຄຣິສຕະຈັກເມືອງເອເຟໂຊສາມປີ ໃນຕອນທີ່ເພິ່ນເດີນທາງໄປປະກາດຂ່າວປະເສີດຄັ້ງທີສາມ (ກິຈການ 20:31). ປໂຍກທີ່ຍາວທີ່ສຸດໃນພຣະຄັມພີໃໝ່ທີ່ເປັນພາສາກຣີກແມ່ນ ເອເຟໂຊ 1:3-14 ຊຶ່ງເປັນຕອນທີ່ໂປໂລໄດ້ສັຣເສີນການງານຂອງພຣະບິດາ (ຂໍ້ 3-6), ພຣະບຸດ (ຂໍ້ 7-12), ແລະພຣະວິນຍານບໍຣິສຸດ (ຂໍ້ 13-14 ) ເຣື່ອງຄວາມລອດພົ້ນ. ໃນພາສາກຣີກ, ຂໍ້ທີ 15-21 ແມ່ນອີກປໂຍກນຶ່ງທີ່ຍາວຊຶ່ງໄດ້ບັນທຶກການອະທິຖານທີ່ເວົ້າເຖິງຄວາມຮັກຂອງໂປໂລທີ່ມີຕໍ່ຜູ້ທີ່ເຊື່ອໃນເມືອງເອເຟໂຊ.

ໂປໂລໄດ້ຂອບຄຸນພຣະເຈົ້າເພື່ອຜູ້ທີ່ເຊື່ອໃນເມືອງເອເຟໂຊ ແລະໄດ້ທູນຕໍ່ພຣະບິດາໃຫ້ຊົງປະທານຈິດໃຈທີ່ມີຄວາມເຂົ້າໃຈແຈ້ງແກ່ເຂົາເຈົ້າ, ໄດ້ອ້ອນວອນວ່າໃຫ້**ຕາພາຍໃນ** (ໃຈ) ຂອງເຂົາເຈົ້າ**ສະວ່າງຂຶ້ນ** ( ຂໍ້ 15-18). ໄດ້ຊີ້

ໃຫ້ເຫັນເຖິງຄວາມຕ້ອງການ**ທາງໃຈ,** ເປັນໃຈກາງຂອງສິນທັມແລະຄວາມເຂົ້າໃຈໃນດ້ານຈິດວິນຍານ ເພື່ອໃຫ້ເຫັນແຈ້ງແລະມີຄວາມຮູ້ສຶກໄວເພື່ອຈະມີຄວາມເຂົ້າໃຈແລະນຳໄປໃຊ້ໃນວຽກງານຂອງພຣະເຈົ້າ. ພື້ນຖານຄວາມຈິງໃນເຣື່ອງຈິດວິນຍານ ທີ່ຜູ້ເຊື່ອຕ້ອງແນໃສ່ນັ້ນແມ່ນ**ຄວາມຫວັງທີ່ພຣະອົງຊົງຮຽກເອີ້ນ.** ຖ້ອຍຄຳທີ່ວ່າ ຄວາມຫວັງ ແລະການຊົງຮຽກເອີ້ນ ເປັນຖ້ອຍຄຳທີ່ໂປໂລເພິ່ງພໍໃຈ. ຄວາມຫວັງ ໝາຍເຖິງອະນາຄົດອັນແນ່ນອນ ແລະການຊົງຮຽກເອີ້ນ ທີ່ພຣະເຈົ້າຊົງປະທານໃຫ້ຜູ້ທີ່ຈະເປັນໄພ່ພົນຂອງພຣະອົງ.

ໂປໂລໄດ້ອະທິບາຍເຖິງອະນາຄົດອັນແນ່ນອນສອງປະການຂອງໄພ່ພົນຂອງພຣະເຈົ້າ. ປະການທຳອິດ, ພຣະເຈົ້າຊົງຮຽກເອີ້ນພວກເຮົາດັ່ງນັ້ນພວກເຮົາຈຶ່ງຮູ້ວ່າ "**ມໍຣະດົກຂອງພຣະອົງສຳລັບພວກໄພ່ພົນຂອງພຣະອົງນັ້ນມີສະງ່າຣາສີອັນອຸດົມສົມບູນພຽງໃດ**" ອົງພຣະວິນຍານບໍຣິສຸດເປັນຜູ້ຮັບປະກັນລ່ວງໜ້າວ່າພຣະບິດາມີແຜນທີ່ຈະຊົງປະທານໃຫ້ບັນດາປະໂຣຫິດ, ໄພ່ພົນທັງປວງ ໃນພຣະຣາຊອານາຈັກໃນອະນາຄົດ. ພຣະວິນຍານບໍຣິສຸດທີ່ສະຖິດຢູ່ນຳພວກເຮົາຈະເພີ້ມພະລັງໃຫ້ເຮົາຊົມຊື່ນຍິນດີກັບຜົນປໂຍດຕ່າງໆ ແລະພຣະພອນທີ່ເຮົາໄດ້ຮັບຈາກຄວາມລອດພົ້ນໃນເວລານີ້. ປະການທີສອງ, ພຣະເຈົ້າຊົງຮຽກເອີ້ນພວກເຮົາດັ່ງນັ້ນພວກເຮົາຈຶ່ງຮູ້ວ່າ "**ຣິດອຳນາດອັນຍິ່ງໃຫຍ່ເຫລືອປະມານຂອງພຣະອົງມີຫລາຍພຽງໃດສຳລັບພວກເຮົາທີ່ເຊື່ອ.**" ເພາະວ່າພຣະເຈົ້າຊົງມີຣິດອຳນາດສູງສຸດ, ອຳນາດຂອງພຣະອົງບໍ່ມີຂອບເຂດຈຳກັດແລະບໍ່ສາມາດວັດແທກໄດ້. ເພື່ອເປັນການເນັ້ນໜັກ, ໂປໂລ ຈຶ່ງໄດ້ໃຊ້ຖ້ອຍຄຳທີ່ມີຄວາມໝາຍໃກ້ຄຽງກັນຄື **ຣິດອຳນາດ...ການງານ...ພະລັງ**

ພຣະເຈົ້າຊົງສຳແດງຣິດອຳນາດໃນການຊົງບັນດົນໃຫ້ພຣະຄຣິດເປັນຄືນມາຈາກຕາຍ(ຄືນພຣະຊົນ). ການຊົງຄືນພຣະຊົນຂອງພຣະເຢຊູຄຣິດ ເຮັດໃຫ້ຄຣິສຕຽນມີຄວາມແຕກຕ່າງຈາກສາສນາອື່ນໆ ແລະເປັນການເນັ້ນໜັກວ່າຄວາມລອດພົ້ນແມ່ນການກະທຳຂອງພຣະເຈົ້າເທົ່ານັ້ນ. ພຣະເຈົ້າເທົ່ານັ້ນທີ່ມີໄຊຊະນະເໜືອຄວາມບາບແລະຄວາມຕາຍໂດຍຜ່ານການວາຍພຣະຊົນແລະການຄືນພຣະຊົນຂອງພຣະບຸດຂອງພຣະອົງ. ພຣະທັມຂ່າວປະເສີດທຸກເຫລັ້ມໄດ້ຈົດບັນທຶກໄວ້ວ່າພຣະເຢຊູຊົງຕາຍທາງຮ່າງກາຍແທ້ເທິງໄມ້ກາງແຂນ ແລະພຣະສົບຂອງພຣະອົງກໍຊົງຖືກຝັງໄວ້ທີ່ອຸບໂມງ (ມັດທາຍ 27:50-60). ພຣະເຢຊູຊົງຄືນມາຈາກຕາຍແລະມີຊີວິດອີກຊຶ່ງປາກົດໃຫ້ບັນດາອັກສາວົກຫລາຍຄົນເຫັນພ້ອມທັງບັນດາຜູ້ທີ່ເຊື່ອ 500 ຄົນ ( 1 ໂກຣິນໂທ 15:6) ເປັນເວລາເຖິງ 40 ວັນ (ກິຈການ 1:3) ຫລັງຈາກນັ້ນພຣະອົງຊົງສະເດັດກັບຄືນສູ່ສວັນ (ກິຈການ 1:9-11). ອົງພຣະເຢຊູ "**ຊົງປະທັບຢູ່ເບື້ອງຂວາພຣະຫັດຂອງພຣະເຈົ້າໃນສວັນສະຖານ.**" ການຊົງຖືກຍົກຂຶ້ນນີ້ພຣະອົງກໍ**ຊົງສູງກວ່າ**ບັນດາຜູ້ປົກຄອງ, ຜູ້ມີອຳນາດ ບໍ່ວ່າທາງດ້ານຮ່າງກາຍແລະດ້ານວິນຍານ, **ບໍ່ໃຊ່ໃນສມັຍນີ້ເທົ່ານັ້ນ ແຕ່ວ່າໃນສມັຍທີ່ຈະມາເຖິງດ້ວຍ.** ພຣະເຢຊູຊົງເປັນທະນາຍຄວາມໃຫ້ແກ່ໄພ່ພົນຂອງພຣະອົງ. ພຣະອົງຊົງລໍຄອຍວັນທີ່ພຣະບິດາຈະແຕ່ງຕັ້ງໃຫ້ພຣະອົງສະເດັດກັບມາອີກ. ນີ້ແມ່ນພຣະບຸດຂອງພຣະເຈົ້າ, ຜູ້ຊຶ່ງໄດ້ຄືນພຣະຊົນເພື່ອທ່ານແລະຊົງເພີ້ມພະລັງໃຫ້ແກ່ທ່ານເພື່ອຈະໄດ້ດຳຣົງຊີວິດໃຫ້ສົມກັບການຄືນພຣະຊົນຂອງພຣະອົງ. ດ້ວຍການເຂົ້າໃຈວ່າພຣະເຢຊູຊົງຖືກບັນດົນໃຫ້ຄືນພຣະຊົນແລະຊົງຍົກພຣະອົງຂຶ້ນໄປປະທັບຢູ່ກ້ຳຂວາຂອງພຣະຫັດພຣະອົງ, ຄົນທັງຫລາຍສາມາດຍອມຮັບໄດ້ວ່າພຣະເຈົ້າເທົ່ານັ້ນທີ່ສາມາດປະທານຊີວິດໃໝ່ແລະຄວາມຫວັງ ຄືຜູ້ທີ່ເຊື່ອວ່າພຣະບຸດຂອງພຣະອົງຊົງຄືນພຣະຊົນ.

## ຂ. ຣິດອຳນາດທີ່ຊ່ວຍໃຫ້ລອດພົ້ນ. ( ເອເຟໂຊ 2:4-9 )

ໃນພຣະທັມເອເຟໂຊບົດທີສອງ ສາມຂໍ້ທຳອິດໄດ້ເວົ້າເຖິງຄວາມບາບແລະຄວາມຊົ່ວຮ້າຍອັນຍິ່ງໃຫຍ່ຂອງມະນຸດ. ຄວາມໂສກເສົ້າອັນແທ້ຈິງນັ້ນແມ່ນທຸກຄົນທີ່ເກີດມາໃນໂລກນີ້ໄດ້ຕາຍໃນຄວາມບາບຂອງຕົນ (ເອເຟໂຊ 2:1) ຄົນທັງຫລາຍດຳຣົງຊີວິດຕາມມາຕະຖານຂອງໂລກແລະຂອງມານ ບໍ່ຕາມມາຕະຖານຂອງພຣະເຈົ້າ (ຂໍ້ທີ 2) ມະນຸດທຸກຄົນເປັນຄົນບາບ (ໂຣມ 3:23) ແລະສົມຄວນໄດ້ຮັບພຣະພິໂຣດຂອງພຣະເຈົ້າ (ເອເຟໂຊ 2:3) ເຂົາເຈົ້າບໍ່ມີທາງທີ່ຈະຫລີກເວັ້ນຈາກພຣະພິໂຣດຂອງພຣະເຈົ້າໄປໄດ້ໂດຍຄວາມພະຍາມຂອງເຂົາເຈົ້າເອງ.

**ແຕ່ພຣະເຈົ້າ**ຊົງມີແຜນການເພື່ອຕຽມຄວາມລອດພົ້ນໄວ້ໃຫ້ບັນດາຜູ້ຫລົງເສັຽໂດຍທາງ**ພຣະຄຸນແລະຄວາມຮັກ.** ເຖິງແມ່ນວ່າ ພວກເຮົາຈະ**ຕາຍໃນຄວາມຜິດບາບ** ພຣະເຈົ້າຈະຊົງປະທານໃຫ້ພວກເຮົາມີຊີວິດ**ໃນອົງພຣະເມຊີ**

**ອາ** ໂດຍປະທານຊີວິດດ້ານຈິດວິນຍານໃຫ້ແກ່ພວກເຮົາເພື່ອວ່າ**ໂດຍທາງພຣະຄຸນ**ພວກເຮົາຈະໄດ້ຮັບ**ຄວາມລອດພົ້ນ.** ຄວາມຈິງອັນອັສຈັນຂອງຂ່າວປະເສີດນັ້ນແມ່ນ ເຮົາບໍ່ສາມາດເຮັດເອົາເອງເພື່ອໃຫ້ໄດ້ຄວາມລອດພົ້ນ ແຕ່ພຣະເຈົ້າຊົງເປັນຜູ້ປະທານໃຫ້ແກ່ເຮົາ.

ພຣະເຈົ້າຊົງໃຫ້ພຣະບຸດຂອງພຣະອົງເສັຽສະລະຊີວິດເພື່ອຄວາມບາບຂອງພວກເຮົາ ແລະພຣະອົງຊົງປະທານຣິດອຳນາດໃຫ້ພວກເຮົາຜູ້ຕາຍແລ້ວຝ່າຍວິນຍານໃຫ້ມີຄວາມເຊື່ອໃນອົງພຣະເຢຊູຄຣິດ. ພຣະເຢຊູໄດ້ຖືກບັນດົນໃຫ້ເປັນຄືນມາຈາກຕາຍແລະຊົງປະທັບຢູ່ກ້ຳຂວາຂອງພຣະເຈົ້າ, ພຣະອົງຈະ**ຊົງບັນດົນໃຫ້ພວກເຮົາເປັນຄືນມາເຫມືອນກັບພຣະອົງ** ເຮັດໃຫ້ພວກເຮົາມີຊັຍຊະນະຕໍ່ຄວາມຕາຍ ເພາະວ່າພຣະເຢຊູຊົງໄດ້ກະທຳເພື່ອພວກເຮົາແລ້ວ. ພຣະອົງຈະຊົງໃຫ້ພວກເຮົາໄດ້**ນັ່ງຢູ່ໃນສວັນສະຖານຮ່ວມກັບອົງພຣະຄຣິດ** ຈັດສະຖານທີ່ໃຫ້ພວກເຮົາໄດ້ຢູ່ໃກ້ກັບພຣະບິດາເພາະພວກເຮົາມີຄວາມສັມພັນກັບພຣະບຸດຂອງພຣະເຈົ້າ. ການຖືກຍົກຂຶ້ນໄປຢູ່ນຳພຣະຄຣິດແມ່ນການປາກົດທາງຊີວິດດ້ານຈິດວິນຍານອັນແທ້ຈິງແລະຈະສຳເຣັດເປັນຈິງເມື່ອພຣະຄຣິດສະເດັດກັບມາ**ໃນອະນາຄົດນີ້,** ເພື່ອພຣະເຈົ້າຈະຊົງ**ສຳແດງພຣະຄຸນອັນເຫລືອລົ້ນຂອງພຣະອົງ.** ເພາະວ່າພຣະເຈົ້າຊົງໄຖ່ມະນຸດໃຫ້ລອດພົ້ນຈາກບາບ, ພວກເຮົາກໍຈະປາກົດເປັນເຫມືອນລາງວັນແຫ່ງພຣະຄຸນຂອງພຣະອົງໃນອົງພຣະຄຣິດເຈົ້າ.

ເພື່ອໃຫ້ທຸກຄົນມີຄວາມເຂົ້າໃຈເຣື່ອງພຣະຄຸນຂອງພຣະເຈົ້າໃນຄວາມລອດພົ້ນ, ໂປໂລໄດ້ເນັ້ນຫນັກໃນຈຸດນີ້ໃນຂໍ້ທີ 8-9 ພວກທ່ານໄດ້ຮັບຄວາມພົ້ນໂດຍ**ທາງພຣະຄຸນຄືພຣະຄຸນ**ຂອງ**ພຣະເຈົ້າ**. ຄວາມລອດພົ້ນທີ່ເຮົາບໍ່ສົມຄວນທີ່ຈະໄດ້ຮັບນັ້ນ ແຕ່ບັດນີ້ເຮົາໄດ້ຮັບໂດຍທາງຄວາມເຊື່ອ, ຄວາມວາງໃຈພຣະຄຣິດແລະການກະທຳຂອງພຣະອົງເພື່ອພວກເຮົາທັງຫລາຍ ຈຶ່ງສົ່ງຜົນໃຫ້ພວກເຮົາໄດ້ຮັບຄວາມລອດພົ້ນນີ້.

ໃນຖ້ອຍຄຳທີ່ວ່າ **ບໍ່ແມ່ນທ່ານເຮັດເອົາເອງ** ມີຄວາມຫມາຍວ່າຄວາມລອດພົ້ນບໍ່ໄດ້ຂຶ້ນຢູ່ກັບຄວາມພະຍາຍາມໃນການກະທຳຂອງພວກເຮົາ. ພຣະຄຸນ ແລະການໄດ້ຮັບຄວາມລອດພົ້ນທາງຄວາມເຊື່ອ ທັງຫມົດນີ້ແມ່ນ**ຂອງຂວັນ(ຂອງພຣະຣາຊທານ)ຈາກພຣະເຈົ້າ** ຊຶ່ງມີຄວາມຫມາຍວ່າບໍ່ມີໃຜເຮັດເອົາເອງແລະສາມາດຮັບຂອງຂວັນນີ້ຈົນກວ່າລາວເຊົາພະຍາຍາມທີ່ຈະເຮັດເອົາເອັງແລ້ວລາວຈຶ່ງຈະໄດ້ຮັບ. ແທ້ຈິງແລ້ວເຮົາບໍ່ໄດ້ຮັບຄວາມລອດພົ້ນດ້ວຍການເຮັດເອົາເອງ (ໂຣທ 11:16) ເພື່ອທຸກຄົນ**ຈະບໍ່ອວດອ້າງໄດ້** ມີແຕ່ພຣະເຈົ້າເທົ່ານັ້ນທີ່ຊົງເປັນຜູ້ປະທານໃຫ້

ທ່ານໄດ້ຮັບຄວາມລອດພົ້ນແລະຊີວິດໃຫມ່ທີ່ເປັນຂອງຂວັນຈາກພຣະເຈົ້າແລ້ວບໍ ດ້ວຍການວາງໃຈເຊື່ອໃນອົງພຣະເຢຊູຄຣິດ ໃຫ້ພຣະອົງເປັນພຣະຜູ້ໂຜດໃຫ້ພົ້ນຂອງທ່ານ? ມື້ນີ້ອາດຈະເປັນມື້ທີ່ທ່ານໄດ້ຮັບຄວາມລອດພົ້ນ ( 2 ໂກຣິນໂທ 6:2 ) ຖ້າທ່ານຫາກເຊື່ອໃນອົງພຣະເຢຊູຄຣິດໃຫ້ເປັນຜູ້ຊ່ອຍທ່ານລອດພົ້ນຈາກຄວາມບາບ.

**3.** **ຣິດອຳນາດແຫ່ງພຣະວິນຍານ.** ( ເອເຟໂຊ 3:16-21)

ໂປໂລໄດ້ເລີ້ມອະທິຖານອີກໃນພຣະທັມເອເຟໂຊ 3:14-15. ໂປໂລໄດ້ທູນພຣະບິດາເພື່ອໃຫ້ບັນດາຜູ້ທີ່ເຊື່ອໃນເມືອງເອເຟໂຊໃຫ້ມີຄວາມສັມພັນກັບພຣະອົງສີ່ປະການ (ຂໍ້ 16-19)

ປະການທີນຶ່ງ, ໂປໂລໄດ້ອະທິຖານເພື່ອໄພ່ພົນຂອງພຣະເຈົ້າ "**ຂໍໃຫ້ພຣະອົງ ຊົງໂຜດປະທານກຳລັງອັນເຂັ້ມແຂງຝ່າຍຈິດໃຈແກ່ທ່ານທັງຫລາຍ**" ບັນດາຜູ້ທີ່ເຊື່ອທັງຫມົດໄດ້ປະເຊີນກັບບັນຫາຫລາຍຢ່າງຕໍ່ຄວາມສັມພັນທີ່ເຂົາເຈົ້າມີກັບອົງພຣະຄຣິດ, ແຕ່ພຣະເຈົ້າຊົງປະທານພຣະວິນຍານຂອງພຣະອົງໃຫ້ເພື່ອໃຫ້ເຂົາເຈົ້າມີຊັຍຊະນະຕໍ່ການທົດລອງແລະຍອມເຊື່ອຟັງພຣະອົງຢ່າງຫມັ້ນຄົງ.

ປະການທີສອງ, ໂປໂລໄດ້ຂາບທູນວ່າ "**ເພື່ອພຣະຄຣິດຈະຊົງຕັ້ງຢູ່ໃນໃຈຂອງທ່ານທັງຫລາຍທາງຄວາມເຊື່ອ.**" ຊຶ່ງບໍ່ໄດ້ອ້າງເຖິງຄວາມເຊື່ອຕອນທີ່ໄດ້ຮັບຄວາມລອດພົ້ນ, ແຕ່ແມ່ນຄວາມເຊື່ອໃນການດຳລົງຊີວິດປະຈຳວັນທີ່ໃກ້ຊິດກັບອົງພຣະຄຣິດເມື່ອຫົວໃຈຂອງຜູ້ທີ່ເຊື່ອຕັ້ງຫມັ້ນຄົງຢູ່ໃນອົງພຣະຜູ້ເປັນເຈົ້າ ແລະກະທຳໃນສິ່ງທີ່ພຣະອົງຊົງພໍພຣະທັຍທຸກເວລາ(ເປັນຜູ້ທີ່ບໍຣິສຸດ).

ປະການທີສາມ, ສຳລັບບັນດາຜູ້ທີ່ "**ວາງຮາກຖານລົງຫມັ້ນຄົງໃນຄວາມຮັກແລ້ວ**" ໂປໂລຢາກໃຫ້ເຂົາເຈົ້າມີຄວາມສາມາດເຂົ້າໃຈ ຢ່າງແທ້ຈິງໃນທຸກແງ່ທຸກມຸມຄື **ຄວາມກວ້າງ, ຄວາມຍາວ, ຄວາມສູງ, ແລະຄວາມເລິກ**

ຂອງຄວາມຮັກ. ຄວາມຮັກນີ້ແມ່ນ**ຄວາມຮັກຂອງອົງພຣະຄຣິດຊຶ່ງເກີນຄວາມຮູ້** . ຄວາມຊົມຊື່ນຍິນດີໃນຊີວິດຄຣິສຕຽນຢ່າງນຶ່ງທີ່ມີແມ່ນມີຄວາມເຂົ້າໃຈເພີ້ມຂື້ນເລື້ອຍໆໃນ**ຄວາມຮັກ**ຂອງພຣະຄຣິດ. ໃນຂະນະທີ່ພວກເຮົາພັທນາຊີວິດໃຫ້ຄ້າຍຄືພຣະຄຣິດ ພວກເຮົາຈະມີຄວາມຮູ້ສືກເພີ້ມຂື້ນອັນໃຫຍ່ຫລວງຈົນ**ເກີນຄວາມຮູ້ທັງຫລາຍ**ທີ່ເຮົາຄິດບໍ່ເຖິງ.

ປະການທີສີ່, ເປົ້າໝາຍທີ່ໂປໂລໄດ້ທູນຂໍນັ້ນແມ່ນ "**ເພື່ອໃຫ້ທ່ານທັງຫລາຍຈະໄດ້ຮັບຄວາມເຕັມບໍຣິບູນຂອງພຣະເຈົ້າທຸກປະການ.**" ເປົ້າໝາຍອັນສູງສຸດຂອງຄຣິສຕຽນແມ່ນການປ່ຽນແປງຊີວິດໃຫ້ເປັນເຫມືອນພຣະລັກສະນະຂອງພຣະຄຣິດ **ການໄດ້ຮັບຄວາມເຕັມບໍຣິບູນຂອງພຣະເຈົ້າ**ແມ່ນການຍອມຢູ່ໃຕ້ການນຳພາຂອງພຣະວິນຍານ ຊຶ່ງເປັນຄຸນສົມບັດທີ່ສະແດງອອກໃນທຸກແງ່ມຸມຂອງຊີວິດຂອງພວກເຮົາ. ເວົ້າໃຫ້ເຂົ້າໃຈງ່າຍກໍຄື ໂປໂລໄດ້ອະທິຖານເພື່ອໄພ່ພົນຂອງພຣະເຈົ້າທຸກຄົນເພື່ອໃຫ້ພຣະລັກສະນະຂອງພຣະເຈົ້າໃນຕົວຂອງເຂົາເຈົ້າ ໄດ້ເປັນແວ່ນແຍງໃຫ້ແກ່ເຂົາເຈົ້າເອງ .

ໂປໂລໄດ້ເຕືອນພວກເຮົາວ່າ ພຣະເຈົ້າຊົງມີຣິດອຳນາດທີ່ບໍ່ມີຂອບເຂດຈຳກັດ, **ຄືຣິດອຳນາດທີ່ກຳລັງດຳເນີນຢູ່ພາຍໃນຕົວເຮົາທັງຫລາຍ.** ຜ່ານຣິດອຳນາດນີ້ ພຣະອົງປະທານພຣະພອນດ້ານຈິດວິນຍານທຸກຢ່າງທີ່ຈຳເປັນໃຫ້ແກ່ພວກເຮົາ **ຜູ້ຊົງຣິດສາມາດກະທຳນອກເຫນືອສາຣະພັດຫລືຊົງສາມາດກະທຳເຫນືອກວ່າທີ່ພວກເຮົາຈະຂໍຫລືຄິດໄດ້** ເພື່ອໃຫ້ພວກເຮົາຍອມກະທຳຕາມພຣະອົງ. ພຣະເຈົ້າຈະຊົງປ່ຽນແປງພວກເຮົາໃຫ້ມີລັກສະນະເຫມືອນອົງພຣະຄຣິດ. ໃນກໍຣະນີນີ້, ຕໍ່ບັນດາຜູ້ທີ່ເຊື່ອທຸກຊົ່ວອາຍຸຄົນ ພວກເຮົາຖວາຍພຣະກຽດແດ່ພຣະເຈົ້າດ້ວຍການສະແດງຣິດອຳນາດຂອງພຣະວິນຍານຊຶ່ງທຳງານໃນຊີວິດຂອງພວກເຮົາ.

## ບົດຮຽນຊີວິດ

ຄວາມພົ້ນທີ່ພຣະເຈົ້າຊົງປະທານໃຫ້ແກ່ພວກເຮົາທາງຄວາມເຊື່ອໃນພຣະເຢຊູແມ່ນເຮົາໄດ້ລ້າງ ແຕ່ບໍ່ໄດ້ໝາຍຄວາມວ່າຣາຄາຖືກ ເພາະວ່າພຣະບຸດຂອງພຣະອົງໄດ້ເສັຽສະລະຊີວິດເພື່ອຄວາມລອດພົ້ນນີ້. ໂດຍພຣະຄຸນຂອງພຣະເຈົ້າ ພຣະອົງຊົງໂຜດທຸກຄົນທີ່ເຊື່ອໃນອົງພຣະເຢຊູຄຣິດໃຫ້ພົ້ນ, ພວກເຮົາຈຶ່ງຊົມຊື່ນຍິນດີໃນຊີວິດທີ່ພຣະອົງຊົງປະທານໃຫ້ຜ່ານຣິດອຳນາດຂອງພຣະວິນຍານບໍຣິສຸດທີ່ຊົງສະຖິດຢູ່ໃນເຮົາ. ການຄືນພຣະຊົນຂອງພຣະເຢຊູໄດ້ຊີ້ໃຫ້ເຫັນເຖິງຣິດອຳນາດຂອງພຣະເຈົ້າທີ່ຊົງປະທານໃຫ້ບັນດາຜູ້ທີ່ເຊື່ອໃຫ້ມີຊີວິດທີ່ຊົມຊື່ນຍິນດີ, ທີ່ມີຄວາມໝາຍແລະມີຊັຍຊະນະ. ພຣະເຈົ້າປະສົງໃຫ້ທຸກຄົນໄດ້ຮັບຊີວິດໃຫມ່ໂດຍການເຊື່ອໃນອົງພຣະເຢຊູຄຣິດເປັນພຣະຜູ້ໂຜດໃຫ້ພົ້ນ. ຕໍ່ໄປນີ້ແມ່ນບາງຢ່າງຈາກບົດຮຽນມື້ນີ້ ທີ່ພວກເຮົາສາມາດນຳໄປໃຊ້ໃນຊີວິດແຕ່ລະວັນ...

- ຈົ່ງຂອບພຣະຄຸນພຣະເຈົ້າທຸກໆ ວັນທີ່ພຣະເຢຊູມີຊັຍຊະນະເຫນືອຄວາມຕາຍແລະຄວາມບາບເພື່ອທ່ານ
- ຈົ່ງຄິດເຖິງພຣະເຈົ້າທີ່ພຣະອົງຊົງສຳແດງພຣະຄຸນຕໍ່ຊີວິດຄຣິສຕຽນຂອງທ່ານແລະທ່ານຈະສາມາດສະແດງຄວາມຮັກແລະເມດຕາຕໍ່ຄົນອື່ນຢ່າງໃດ.
- ຈົ່ງໄຕ່ຕອງເບິ່ງການຊ່ອຍເຫລືອຂອງພຣະເຈົ້າ (ຄວາມຄົບບໍຣິບູນຂອງພຣະອົງ) ໃນເວລາສຶກສາພຣະຄັມພີແຕ່ລະວັນຂອງທ່ານ ຂຽນເປັນລາຍການໃນສິ່ງທີ່ພຣະອົງໄດ້ຊ່ອຍແລະສັຣເສີນພຣະອົງ

ພຣະເຢຊູຊົງຕາຍແລະເປັນຄືນມາໃຫມ່ອີກ ແລະບໍ່ຕາຍອີກ ພຣະສົບຂອງພຣະອົງບໍ່ໄດ້ຢູ່ໃນອຸບໂມງຫລືຢູ່ໃນຫລຸມຝັງສົບເຫມືອນບັນດາຜູ້ນຳສາສນາອື່ນໆ . ການຄືນພຣະຊົນຂອງພຣະເຢຊູ ແມ່ນພຣະອົງຊົງມີຊັຍຊະນະເຫນືອຄວາມຕາຍແລະນຳຄວາມລອດພົ້ນມາໃຫ້ບັນດາຜູ້ທີ່ເຊື່ອວ່າພຣະອົງຊົງເປັນພຣະຜູ້ໂຜດໃຫ້ພົ້ນຂອງເຂົາເຈົ້າ. ການວາງໃຈເຊື່ອໃນພຣະເຢຊູ ພວກເຮົາສາມາດຈະໄດ້ຮັບຊັຍຊະນະເຫນືອຄວາມຕາຍແລະໄດ້ຮັບຊີວິດທີ່ຄົບບໍຣິບູນທັງໃນຊາດນີ້ແລະຊີວິດນິຣັນຫລືຊີວິດອັນຕລອດໄປເປັນນິດ ໃນອະນາຄົດ.